ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ
ເຈົ້າແຂວງ

ເລກທີ 1010 /ອຊ
ອຸດົມໄຊ, ວັນທີ 31 ສິງຫາ 2023

# ຂໍ້ຕົກລົງ
## ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳແຂວງ ອຸດົມໄຊ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ສະບັບເລກທີ 68 /ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06 /ສພຊ, ລົງວັນທີ16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ, ສະບັບປັບປຸງເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍກະສິກຳ, ສະບັບເລກທີ 01/98 ສພຊ, ລົງວັນທີ10 ຕຸລາ 1998;
- ອີງຕາມ ມະຕິກອງປະຊຸມ ສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ສະບັບເລກທີ 986 /ສພຂ. ລົງວັນທີ 04 ສິງຫາ 2023.

### ເຈົ້າແຂວງ ຕົກລົງ:
### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ເພື່ອຮັບປະກັນໃນການກຳນົດ, ຈັດສັນແບ່ງເຂດ ແລະ ແບ່ງຄວາມຮັບຜິດຊອບ ຂອງພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງນຳໃຊ້ຢ່າງລະອຽດ, ແນໃສ່ເຮັດໃຫ້ການປົກປັກຮັກສາ, ການຄຸ້ມຄອງ, ການພັດທະນາ ແລະ ການຫັນປ່ຽນປະເພດທີ່ດິນກະສິກຳ ໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ, ຮັບປະກັນໃຫ້ການນຳໃຊ້ທີ່ດິນກະສິກຳ ໄປຕາມທິດຍືນຍົງ-ສີຂຽວ. ປະກອບສ່ວນຢ່າງແຂງແຮງ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາແຂວງ ອຸດົມໄຊ ມີຄວາມເປັນລະບຽບ, ຮຽບຮ້ອຍ ແລະ ຍຸຕິທຳ.

**ມາດຕາ 2 ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ**

ແມ່ນການສຳຫຼວດ, ຈັດສັນ, ການກຳນົດແບ່ງເຂດ ແລະ ປັກຫຼັກໝາຍທີ່ດິນກະສິກຳ (ເຂດຜະລິດສະບຽງອາຫານ, ເຂດຜະລິດສິນຄ້າ), ວາງແຜນ ແລະ ຄຸ້ມຄອງການນຳໃຊ້ໃຫ້ສອດຄ່ອງກັບທີ່ຕັ້ງ, ສອດຄ່ອງກັບການຜະລິດກະສິກຳ ແລະ ແຜນແມ່ບົດຈັດສັນທີ່ດິນຂອງແຂວງ; ບົນພື້ນຖານເຫັນດີເປັນເອກະພາບ ກັບ

ບັນດາພະແນກການ ແລະ ອົງການປົກຄອງທີ່ກ່ຽວຂ້ອງ, ຮັບປະກັນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ສາມາດຕອບສະໜອງໃຫ້ແກ່ການຜະລິດສະບຽງອາຫານ ແລະ ການຜະລິດເປັນສິນຄ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

**1.** ທີ່ດິນກະສິກຳ ໝາຍເຖິງ ທີ່ດິນໄດ້ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ ແລະ ການຄົ້ນຄວ້າທົດລອງດ້ານກະສິກຳ ລວມທັງທີ່ດິນຊົນລະປະທານ; ລາຍລະອຽດຄື:

**1.1** ທີ່ດິນສຳລັບການປູກຝັງ ເພື່ອນຳໃຊ້ເຂົ້າໃນການປູກເຂົ້າ, ປູກພືດສະບຽງອາຫານ-ສິນຄ້າ, ການປູກພືດອຸດສາຫະກຳ, ປູກໄມ້ໃຫ້ໝາກ, ປູກໄມ້ອຸດສາຫະກຳ ແລະ ອື່ນໆ;

**1.2** ທີ່ດິນລ້ຽງສັດ ແມ່ນປະເພດດິນປອກໂລ້ນ ຫຼື ປ່າຫຍ້າປະເພດຕ່າງໆ ຊຶ່ງສາມາດຫັນມາປູກພືດ ແລະ ປູກຫຍ້າ ສຳລັບລ້ຽງສັດ ຫຼື ດິນທີ່ສາມາດເຮັດໜອງ ເພື່ອລ້ຽງປາ, ສັດນ້ຳປະເພດຕ່າງໆ ແລະ ອື່ນໆ;

**1.3** ທີ່ດິນສຳລັບການຄົ້ນຄວ້າທົດລອງດ້ານກະສິກຳເພື່ອນຳໃຊ້ເຂົ້າໃນການຄົ້ນຄວ້າທົດລອງດ້ານກະສິກຳຂອງບັນດາສູນ-ສະຖານີບໍລິການເຕັກນິກກະສິກຳ;

**1.4** ທີ່ດິນສຳລັບການຊົນລະປະທານ ທີ່ດິນນຳໃຊ້ຊົນລະປະທານ, ຫ້ອງງານປະເພດໄດປັ່ນໄຟຟ້າ; ການສູບນ້ຳຮັບໃຊ້ການຜະລິດ, ບຶງ-ໜອງ-ອ່າງເກັບນ້ຳ, ຝາຍນ້ຳລົ້ນ ແລະ ເຂື່ອນສຳລັບກະສິກຳ.

**2.** ການຄຸ້ມຄອງທີ່ດິນກະສິກຳ ໝາຍເຖິງ ຂະບວນການ ທີ່ເຮັດໃຫ້ທີ່ດິນກະສິກຳ ໄດ້ມີການຈັດສັນ, ປົກປັກຮັກສາ ແລະ ພັດທະນາຢ່າງມີປະສິດທິຜົນ, ມີຄວາມສະຫງົບ, ຍຸຕິທຳ, ຖືກຕ້ອງຕາມເປົ້າໝາຍດ້ວຍການເກັບກຳຂໍ້ມູນທີ່ດິນ, ປັກຫຼັກໝາຍຂອບເຂດ, ວາງລະບຽບການ, ກຳນົດມາດຕະການ ໃນການຄຸ້ມຄອງ, ກວດກາ ແລະ ປະເມີນຜົນກະທົບ ດ້ານສິ່ງແວດລ້ອມ ແລະ ສັງຄົມ;

**3.** ການນຳໃຊ້ທີ່ດິນກະສິກຳໝາຍເຖິງການຊົມໃຊ້ທີ່ດິນກະສິກຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຊຶ່ງໃນນັ້ນແມ່ນລວມທັງການປົກປັກຮັກສາ, ການພັດທະນາທີ່ໄດ້ຮັບໝາກຜົນຈາກທີ່ດິນກະສິກຳແຕ່ລະປະເພດ ທີ່ໄດ້ຮັບອະນຸຍາດຕາມການຈັດສັນ ແລະ ການວາງແຜນນຳໃຊ້ທີ່ດິນກະສິກຳເຂົ້າໃນເປົ້າໝາຍອື່ນໃຫ້ຖືກຕ້ອງຕາມລະບຽບການ, ກົດໝາຍ ແລະ ເຕັກນິກວິຊາການທີ່ເໝາະສົມ;

**4.** ການພັດທະນາທີ່ດິນກະສິກຳ ໝາຍເຖິງການປົກປັກຮັກສາ ແລະ ປັບປຸງທີ່ດິນກະສິກຳດ້ວຍການລົງທຶນດ້ານແຮງງານ, ວັດຖຸ, ທຶນຮອນ, ເຕັກນິກວິຊາການ, ການກໍ່ສ້າງພື້ນຖານໂຄງລ່າງ ເພື່ອເຮັດໃຫ້ດິນມີຄຸນນະພາບດີ, ແທດເໝາະກັບການຜະລິດກະສິກຳ, ເຮັດໃຫ້ສະມັດຕະພາບການຜະລິດສູງ ແລະ ມີມູນຄ່າເພີ່ມຂຶ້ນ;

**5.** ການຫັນປ່ຽນດິນກະສິກຳ ໝາຍເຖິງ ການຫັນປ່ຽນຈາກດິນກະສິກຳ ໄປເປັນດິນປະເພດອື່ນໆ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ຊຶ່ງເປັນສ່ວນໜຶ່ງຂອງແຜນພັດທະນາເສດຖະກິດ-ສັງຄົມ, ບໍ່ໃຫ້ມີຜົນກະທົບທາງລົບ ຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ພ້ອມທັງ ບໍ່ໃຫ້ຂັດກັບ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດໄວ້;

**6.** ປື້ມຕິດຕາມການນຳໃຊ້ທີ່ດິນກະສິກຳ ໝາຍເຖິງ ເອກະສານເກັບກຳສະຖິຕິຕອນດິນກະສິກຳປະເພດຕ່າງໆ ເຂົ້າປື້ມຕິດຕາມ ການນຳໃຊ້ທີ່ດິນກະສິກຳ ຂອງຂະແໜງກະສິກຳ ແລະ ປ່າໄມ້, ເພື່ອຕິດຕາມ

ການເຄື່ອນໄຫວ ແລະ ປ່ຽນແປງເປົ້າໝາຍການນຳໃຊ້ທີ່ດິນກະສິກຳ, ເປັນຂໍ້ມູນພື້ນຖານໃນການອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ;

**7.** ໃບຢັ້ງຢືນນຳໃຊ້ທີ່ດິນກະສິກຳ ໝາຍເຖິງ ເອກະສານຢັ້ງຢືນກ່ຽວກັບການຜະລິດກະສິກຳ ໃນພື້ນທີ່ດິນກະສິກຳ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ;

**8.** ໃບຢັ້ງຢືນການພັດທະນາທີ່ດິນກະສິກຳ ໝາຍເຖິງເອກະສານຕິດຕາມ, ກວດກາການນຳໃຊ້ທີ່ດິນກະສິກຳຢ່າງຖືກຕ້ອງຕາມເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນດີ;

**9.** ການຜະລິດສະບຽງອາຫານ ໝາຍເຖິງ ການຜະລິດແບບດັ້ງເດີມ ເອກະເທດທົ່ວໄປ ບໍ່ລວມກຸ່ມກັນ, ທີ່ນຳໃຊ້ເຕັກນິກວິຊາການເຂົ້າໃນການຜະລິດ, ຜະລິດເພື່ອບໍລິໂພກພາຍໃນຄອບຄົວໃຫ້ພຽງພໍກຸ້ມກິນ ແລະ ມີສ່ວນເຫຼືອແຮໄວ້, ອາດນຳໄປຂາຍ ແກ້ໄຂຊີວິດປະຈຳວັນ ໃນບາງຄັ້ງຄາວ;

**10.** ການຜະລິດເປັນສິນຄ້າໝາຍເຖິງການຜະລິດແບບມີຈຸດສຸມ, ມີການກຳນົດເຂດການຜະລິດການຜະລິດແບບເປັນກຸ່ມ, ສະຫະກອນ ແລະ ເປັນສະມາຄົມ, ມີການຜະລິດຕໍ່ເນື່ອງຫຼາຍລະດູການ, ນຳໃຊ້ເຕັກນິກວິຊາການອັນໃໝ່ ກົນຈັກທີ່ທັນສະໄໝ, ມີການວາງແຜນການຜະລິດຕິດພັນກັບການຕະຫຼາດ, ຜະລິດຕາມມາດຕະຖານກຳນົດໄວ້, ມີສັນຍາແນ່ນອນ, ມີແຫຼ່ງທຶນທີ່ຮັບປະກັນການນຳໃຊ້ເຂົ້າໃນການຜະລິດ.

### ມາດຕາ 4 ນະໂຍບາຍກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ

ອົງການປົກຄອງແຂວງ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາກລັດ ແລະ ເອກະຊົນພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນໃຫ້ມີປະສິດທິຜົນດ້ວຍການວາງນະໂຍບາຍ, ວິທີການ ແລະ ມາດຕະການຕ່າງໆເຊັ່ນ: ການສຶກສາອົບຮົມ, ສົ່ງເສີມດ້ານທຶນຮອນແຮງງານ, ວັດຖຸ, ເຕັກນິກ-ເຕັກໂນໂລຊີ, ການກໍ່ສ້າງພື້ນຖານໂຄງລ່າງ ແລະ ການຄຸ້ມຄອງ-ບໍລິຫານທີ່ດີ.

ອົງການປົກຄອງແຂວງ ຫຼຸດຜ່ອນ ຫຼື ຍົກເວັ້ນຄ່າທຳນຽມ, ຄ່າບໍລິການສຳຫຼວດ - ວັດແທກຂຶ້ນທະບຽນອອກໃບຕາດິນ, ການເສຍຄ່າທຳນຽມນຳໃຊ້ທີ່ດິນນາໃຫ້ແກ່ຄອບຄົວທຸກຍາກ ແລະ ໃນເຂດບູລິມະສິດ ກະສິກຳ ລວມທັງເຂດທີ່ໄດ້ປະກາດໄພພິບັດ.

ອົງການປົກຄອງແຂວງ ຊຸກຍູ້, ສົ່ງເສີມໃຫ້ມີການພັດທະນາຊັບພະຍາກອນມະນຸດ, ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ, ພັດທະນາພູມປັນຍາຂອງຊາດ ແລະ ທ້ອງຖິ່ນເຂົ້າໃນການຄຸ້ມຄອງບໍລິຫານ, ປົກປັກຮັກສາ, ນຳໃຊ້, ພັດທະນາທີ່ດິນກະສິກຳ ແລະ ຟື້ນຟູດິນໃຫ້ມີຄຸນະພາບດີຂຶ້ນ.

ອົງການປົກຄອງແຂວງ ສົ່ງເສີມສິດເປັນເຈົ້າ ແລະ ບົດບາດຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ ເຂົ້າຮ່ວມໃນການຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ພົວພັນກັບທີ່ດິນກະສິກຳ.

### ມາດຕາ 5 ຫຼັກການຄຸ້ມຄອງ ແລະ ການນຳໃຊ້ ທີ່ດິນກະສິກຳ

ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ຕ້ອງປະຕິບັດຕາມຫຼັກການດັ່ງນີ້:

**1.** ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນແມ່ບົດຈັດສັນທີ່ດິນແຜນຍຸດທະສາດ ແລະ ແຜນນຳໃຊ້ທີ່ດິນກະສິກຳ ລວມທັງວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບຂອງແຂວງ ອຸດົມໄຊ;

**2.** ຄຸ້ມຄອງຢ່າງເປັນເອກະພາບ ແລະ ລວມສູນໃນຂອບເຂດທົ່ວແຂວງ ອຸດົມໄຊ;

**3.** ຮັບປະກັນການຮັກສາເນື້ອທີ່ດິນກະສິກຳຕາມແຜນແມ່ບົດຈັດສັນທີ່ດິນ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ, ເນື້ອທີ່ດິນທີ່ຈະນຳໃຊ້ ແລະ ພັດທະນາຢູ່ໃນລະດັບ10%(ສິບສ່ວນຮ້ອຍ)ຂອງເນື້ອທີ່ດິນທັງໝົດທົ່ວແຂວງ;

**4.** ຮັບປະກັນກົງຈັກການຈັດຕັ້ງ ແລະ ການຄຸ້ມຄອງ-ບໍລິຫານທີ່ດິນໃຫ້ສອດຄ່ອງກັບສະພາບຕົວຈິງໃນແຕ່ລະໄລຍະ, ມີການແບ່ງຂັ້ນຄຸ້ມຄອງລະຫວ່າງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ຈະແຈ້ງ;

**5.** ຮັບປະກັນການມີສ່ວນຮ່ວມຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນອົງການຈັດຕັ້ງສະມາຄົມ, ສື່ມວນຊົນ, ປະຊາຊົນໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ພົວພັນກັບທີ່ດິນກະສິກຳ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ມີຂອບເຂດນຳໃຊ້ສຳລັບອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການ ຈັດຕັ້ງມະຫາຊົນ, ບຸກຄົນ, ນິຕິບຸກຄົນ, ທັງພາຍໃນ ແລະ ຕ່າງປະເທດທີ່ພົວພັນກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນກະສິກຳຢູ່ທົ່ວແຂວງອຸດົມໄຊ.

## ໝວດທີ 2
## ການກຳນົດຂອບເຂດເນື້ອທີ່ດິນກະສິກຳ

**ມາດຕາ 7 ການກຳນົດຂອບເຂດເນື້ອທີ່ດິນກະສິກຳ**

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນໃຈກາງໃນການປະສານສົມທົບກັບບັນດາພະແນກການ, ອົງການລັດທຽບເທົ່າ ແລະ ບັນດາເມືອງທີ່ກ່ຽວຂ້ອງ ໃນການສຳຫຼວດ, ຈັດສັນ, ກຳນົດແບ່ງເຂດ ແລະ ປັກຫຼັກໝາຍຂອບເຂດທີ່ດິນກະສິກຳທົ່ວແຂວງ ເພື່ອວາງແຜນຄຸ້ມຄອງ ແລະ ນຳໃຊ້ຢ່າງເໝາະສົມເປັນຕົ້ນແມ່ນທີ່ດິນເຂດຜະລິດສະບຽງອາຫານ, ທີ່ດິນເຂດຜະລິດເປັນສິນຄ້າ ແລະ ທີ່ດິນສຳລັບລ້ຽງສັດປະເພດຕ່າງໆທົ່ວແຂວງໄດ້ກຳນົດແບ່ງເຂດຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳທັງໝົດ **166.265** ເຮັກຕາ, (ມະຕິກອງປະຊຸມຄະນະປະຈຳສະພາ ປະຊາຊົນແຂວງ ເລກທີ 459 / ຄປຈ.ອຊ, ລົງວັນທີ 15 ມິຖຸນາ 2021) ມີຄືດັ່ງນີ້:

| | |
|---|---|
| 1. ເມືອງໄຊ | **35.018** ເຮັກຕາ; |
| 2. ເມືອງຫຼາ | **16.310** ເຮັກຕາ; |
| 3. ເມືອງນາໝໍ້ | **26.996** ເຮັກຕາ; |
| 4. ເມືອງງາ | **18.059** ເຮັກຕາ; |
| 5. ເມືອງແບງ | **23.469** ເຮັກຕາ; |
| 6. ເມືອງຮຸນ | **32.672** ເຮັກຕາ; |
| 7. ເມືອງປາກແບງ | **13.741** ເຮັກຕາ. |

**ມາດຕາ 8 ຂອບເຂດເນື້ອທີ່ດິນກະສິກຳທີ່ສະຫງວນໄວ້**

ເນື້ອທີ່ດິນກະສິກຳທີ່ສະຫງວນໄວ້ສຳລັບເຮັດນາຢ່າງໜ້ອຍ **15.644** ເຮັກຕາ (ມະຕິກອງປະຊຸມ ຄະນະປະຈຳສະພາ ປະຊາຊົນແຂວງ ເລກທີ 459 / ຄປຈ.ອຊ, ລົງວັນທີ 15 ມິຖຸນາ 2021) ມີຄື:

1. ເມືອງໄຊ **3.950** ເຮັກຕາ;
2. ເມືອງຫຼາ **708** ເຮັກຕາ;
3. ເມືອງນາໝໍ້ **3.248** ເຮັກຕາ;
4. ເມືອງງາ **1.560** ເຮັກຕາ;
5. ເມືອງແບ່ງ **2.960** ເຮັກຕາ;
6. ເມືອງຮຸນ **2.990** ເຮັກຕາ;
7. ເມືອງປາກແບງ **228** ເຮັກຕາ.

## ໝວດທີ 3
## ການຫັນປ່ຽນທີ່ດິນກະສິກຳ, ອົງການຮັບຜິດຊອບ ແລະ ຂັ້ນຕອນວິທີການອອກໃບຍັ້ງຢືນ

**ມາດຕາ 9 ການຫັນປ່ຽນທີ່ດິນກະສິກຳ**

ການຫັນປ່ຽນທີ່ດິນກະສິກຳໄປເປັນດິນປະເພດອື່ນຈະດຳເນີນໄດ້ກໍ່ຕໍ່ເມື່ອຫາກເຫັນວ່າດິນດັ່ງກ່າວມີຄວາມຈຳເປັນ ນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ຊຶ່ງເປັນສ່ວນໜຶ່ງຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ບໍ່ໃຫ້ມີຜົນກະທົບທາງລົບຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ, ບໍ່ຂັດກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດໄວ້.

ຜູ້ໄດ້ຮັບອະນຸຍາດໃຫ້ຫັນປ່ຽນດິນກະສິກຳ ຕ້ອງໄດ້ຮັບຜິດຊອບ ຈ່າຍຄ່າສິ້ນເປືອງບໍລິການທາງດ້ານວິຊາການ, ເສຍຄ່າບູລະນະຟື້ນຟູ, ຄ່າທຳນຽມການຫັນປ່ຽນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 10 ການໂອນສິດນຳໃຊ້, ເຊົ່າ, ສຳປະທານທີ່ດິນກະສິກຳ**

ການໂອນສິດນຳໃຊ້, ການເຊົ່າທີ່ດິນກະສິກຳ ໃຫ້ຜູ້ອື່ນຈະຕ້ອງໄດ້ແຈ້ງໃຫ້ອົງການຄຸ້ມຄອງທີ່ດິນກະສິກຳຮັບຊາບ ພາຍຫລັງ ໂອນສຳເລັດພາຍໃນ 15 ວັນ.

ການສຳປະທານທີ່ດິນກະສິກຳຕ້ອງໄດ້ຜ່ານການວັດແທກແລະຢັ້ງຢືນຈາກຂະແໜງຄຸ້ມຄອງ ແລະພັດທະນາທີ່ດິນກະສິກຳ ພ້ອມທັງ ລາຍງານການພັດທະນາທີ່ດິນດັ່ງກ່າວໃຫ້ພາກສ່ວນກ່ຽວຂ້ອງຮັບຊາບທຸກໆ 2 ປີ ເພື່ອຕິດຕາມກວດກາການນຳໃຊ້ດິນຕອນດັ່ງກ່າວເປັນແຕ່ລະໄລຍະ.

**ມາດຕາ 11 ອົງການຮັບຜິດຊອບ ໃນການຫັນປ່ຽນປະເພດທີ່ດິນກະສິກຳ**

ຕາມກົດໝາຍທີ່ດິນມາດຕາ 27 ການຫັນປ່ຽນທີ່ດິນ ມີ: 1. ສະພາແຫ່ງຊາດ, 2. ລັດຖະບານ, 3. ສະພາປະຊາຊົນແຂວງ.

1. ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ

ສິ່ງແວດລ້ອມ, ອົງການປົກຄອງບ້ານ ເພື່ອລົງສຳຫຼວດ, ກວດກາໃນການຫັນປ່ຽນປະເພດດິນກະສິກຳ ໄປເປັນດິນປະເພດອື່ນ ເພື່ອນຳສະເໜີຕໍ່ ຂັ້ນເທິງເພື່ອຄົ້ນຄວ້າ, ພິຈາລະນາຕົກລົງຕາມ ກົດໝາຍ ແລະ ລະບຽບການ;

2. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ບັນດາຫົວໜ່ວຍທຸລະກິດຕ່າງໆ ທີ່ມີຄວາມຈຳເປັນ ເພື່ອຫັນປ່ຽນທີ່ດິນກະສິກຳໄປເປັນດິນປະເພດອື່ນ ຕ້ອງໄດ້ປະກອບເອກະສານ ຂໍອະນຸຍາດຫັນປ່ຽນຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າພິຈາລະນາ ສະເໜີຂໍອະນຸມັດຕາມຂໍ້ຕົກລົງສະບັບນີ້ວາງອອກຢ່າງເຂັ້ມງວດ.

## ມາດຕາ 12 ຂັ້ນຕອນ ແລະ ວິທີການຢັ້ງຢືນຕອນດິນກະສິກຳ

1. ການສຳຫຼວດ-ຈັດສັນ ແລະ ວາງແຜນການນຳໃຊ້ທີ່ດິນກະສິກຳແບບມີສ່ວນຮ່ວມຂັ້ນບ້ານ;

2. ອອກປຶ້ມຕິດຕາມການນຳໃຊ້ທີ່ດິນກະສິກຳ ເກັບກຳສະຖິຕິຕອນດິນປະເພດຕ່າງໆ ເຂົ້າໃນປຶ້ມຕິດຕາມການນຳໃຊ້ ທີ່ດິນກະສິກຳ ເພື່ອຕິດຕາມການເຄື່ອນໄຫວ ແລະ ປ່ຽນແປງເປົ້າໝາຍການນຳໃຊ້ທີ່ດິນກະສິກຳ;

3. ອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ເພື່ອຢັ້ງຢືນການນຳໃຊ້ທີ່ດິນເຂົ້າໃນການຜະລິດກະສິກຳໃນພື້ນທີ່ດິນກະສິກຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ໂດຍແມ່ນຫ້ອງການກະສິກຳ ແລະ ປ່າໄມ້ເມືອງອອກໃຫ້;

4. ອອກໃບຢັ້ງຢືນການພັດທະນາທີ່ດິນກະສິກຳ ເປັນການຕິດຕາມ, ກວດກາການນຳໃຊ້ທີ່ດິນກະສິກຳຢ່າງຖືກຕ້ອງຕາມເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນເປັນຕົ້ນແມ່ນການລົງທຶນໃນການຜະລິດກະສິກຳຕາມທິດຍືນຍົງທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຕາມເງື່ອນໄຂ, ລະບຽບການຂອງຂະແໜງການກະສິກຳ ແລະ ປ່າໄມ້ກຳນົດໄວ້ໃນແຕ່ລະໄລຍະ;

5. ສຳລັບການຫັນປ່ຽນການນຳໃຊ້ທີ່ດິນກະສິກຳໃຫ້ປະຕິບັດຕາມ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

6. ກຳນົດເວລາການອອກເອກະສານແມ່ນ 15 ວັນລັດຖະການນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ. (ລາຍລະອຽດມີຄູ່ມືແນະນຳການຈັດຕັ້ງປະຕິບັດທີ່ມາຈາກກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ)

# ໝວດທີ 4
# ການເກັບຄ່າທຳນຽມ ແລະ ບໍລິການ ໃນການຫັນປ່ຽນດິນກະສິກຳ

## ມາດຕາ 13 ການເກັບຄ່າບໍລິການ

ເກັບຄ່າບໍລິການສຳຫຼວດ, ວັດແທກເນື້ອທີ່ດິນກະສິກຳ ເພື່ອອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ, ໃບຢັ້ງຢືນພັດທະນາທີ່ດິນກະສິກຳ ແລະ ໃບຢັ້ງຢືນການຫັນປ່ຽນທີ່ດິນກະສິກຳທີ່ມີເນື້ອທີ່ບໍ່ເກີນ 5 ເຮັກຕາມີລາຍລະອຽດດັ່ງຕາຕະລາງລຸ່ມນີ້:

| ລ/ດ | ເນື້ອໃນລາຍການ | ອັດຕາ (ກີບ)/ຕອນ | | |
|---|---|---|---|---|
| | ເຂດສຳຫຼວດວັດແທກ | ຕົວເມືອງ | ຊານເມືອງ | ຊົນນະບົດ |
| 1 | ເຂດທົ່ງພຽງ | 250.000 | 220.000 | 100.000 |
| 2 | ເຂດພູພຽງ | 200.000 | 180.000 | 80.000 |

| 3 | ເຂດພູດອຍ | 160.000 | 140.000 | 50.000 |
|---|---|---|---|---|

ສ່ວນການສຳຫຼວດວັດແທກທີ່ມີໂຄງການລົງທຶນຕ່າງໆ ຈະຖືກຍົກເວັ້ນ.

**ມາດຕາ 14 ການເກັບຄ່າທຳນຽມ**

1. ການເກັບຄ່າທຳນຽມເອກະສານຕ່າງໆ ທີ່ກ່ຽວຂ້ອງໃຫ້ປະຕິບັດຕາມ ລັດຖະບັນຍັດສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ດັ່ງນີ້:

| ລ/ດ | ເນື້ອໃນເອກະສານ | ລາຄາຕໍ່ຫົວໜ່ວຍ |
|---|---|---|
| 1 | ອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ | **50.000** ກີບຕໍ່ຕອນດິນ |
| 2 | ອອກໃບຢັ້ງຢືນການພັດທະນາທີ່ດິນກະສິກຳ | **50.000** ກີບຕໍ່ຕອນດິນ |
| 3 | ອອກໃບຢັ້ງຢືນທັບປ່ຽນດິນກະສິກຳ | **50.000** ກີບຕໍ່ຕອນດິນ |
| 4 | ອອກໃບຢັ້ງຢືນການສຳຫຼວດວັດແທກທີ່ດິນກະສິກຳ | **50.000** ກີບຕໍ່ຕອນດິນ |

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 15 ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ແລະ ອົງການຄຸ້ມຄອງທີ່ດິນກະສິກຳ**

ຫ້າມພະນັກງານ ແລະ ອົງການຄຸ້ມຄອງທີ່ດິນກະສິກຳມີພຶດຕິກຳດັ່ງນີ້:

1. ອອກເອກະສານນຳໃຊ້ທີ່ດິນກະສິກຳໃນກໍລະນີດັ່ງນີ້: ເກີນແຮງງານຄົນໃນຄອບຄົວ, ໃນເຂດຫວງຫ້າມຂອງສາມປະເພດປ່າທີ່ໄດ້ປະກາດໃຊ້ກ່ອນແລ້ວ, ເຂດສະຫງວນແຄມນໍ້າ, ເຂດສະຫງວນລຽບຊາຍແດນລະຫວ່າງຊາດ, ດິນຄ້ອຍຊັນເກີນ 45% ແລະ ເຂດສະຫງວນອື່ນໆ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນ ກ່ຽວກັບການຄຸ້ມຄອງນຳໃຊ້ທີ່ດິນກະສິກຳ;

3. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ຫຼື ນຳໃຊ້ມາດຕະການອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ, ລະບຽບການ ຊຶ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດຜົນປະໂຫຍດຂອງປະຊາຊົນ;

4. ປະລະໜ້າທີ່ ບໍ່ເອົາໃຈໃສ່ເຄື່ອນໄຫວເຮັດໜ້າທີ່ວຽກງານຕາມການຈັດຕັ້ງຂັ້ນເທິງມອບໃຫ້ ຕໍ່ກັບວຽກງານຄຸ້ມຄອງນຳໃຊ້ທີ່ດິນກະສິກຳ;

5. ປອມແປງເອກະສານ, ດຳເນີນການ ຫຼື ເຂົ້າຮ່ວມທຸລະກິດກ່ຽວຂ້ອງກັບວຽກງານທີ່ດິນກະສິກຳ.

**ມາດຕາ 16 ຂໍ້ຫ້າມສຳລັບຜູ້ນຳໃຊ້ດິນກະສິກຳ**

ຜູ້ທີ່ນຳໃຊ້ທີ່ດິນກະສິກຳຕ້ອງປະຕິບັດຂໍ້ຫ້າມດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ບັນດາຫົວໜ່ວຍທຸລະກິດຕ່າງໆ ຈັບເອົາດິນກະສິກຳ, ຖົມດິນກະສິກຳ ແລະ ໄຖດິນກະສິກຳທີ່ມີຄວາມຄ້ອຍຊັນເກີນ 45% ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງກະສິກຳ ແລະ ປ່າໄມ້;

2. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ບັນດາຫົວໜ່ວຍທຸລະກິດຕ່າງໆນຳໃຊ້ທີ່ດິນກະສິກຳເຂົ້າໃນເປົ້າໝາຍອື່ນເຊັ່ນ: ຫັນປ່ຽນເປັນດິນປຸກສ້າງ, ເປັນດິນອຸດສາຫະກຳ ຫຼື ນຳໃຊ້ເຂົ້າເພື່ອດຳເນີນທຸລະກິດດ້ານອື່ນໆໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງກະສິກຳ ແລະ ປ່າໄມ້;

3. ຫັນປ່ຽນ ປະເພດເນື້ອທີ່ດິນກະສິກຳ ໃນເຂດຊົນລະປະທານ ທີ່ສາມາດນຳໃຊ້ເປັນປົກກະຕິໄປເປັນທີ່ດິນປຸກສ້າງທີ່ຢູ່ອາໄສ, ທີ່ດິນອຸດສາຫະກຳການຄ້າ ແລະ ດິນປະເພດອື່ນໆໂດຍບໍ່ໄດ້ຮັບອະນຸຍາດ;

4. ຫັນປ່ຽນເນື້ອທີ່ດິນກະສິກຳທີ່ຢູ່ໃນເຂດທີ່ໄດ້ຖືກກຳນົດ ຫຼື ມີການ ປັກຫຼັກໝາຍໄວ້ແລ້ວ, ໃນກໍລະນີມີຄວາມຈຳເປັນໃນການພັດທະນາ ຕ້ອງໄດ້ຄົ້ນຄວ້າ ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ;

5. ກີດໜ່ວງຖ່ວງດຶງໃນການນຳໃຊ້ດິນທີ່ມີນ້ຳຊົນລະປະທານໃນການພັດທະນາສ້າງເສດຖະກິດໃນການປູກພືດເປັນສິນຄ້າ.

## ໝວດທີ 6
## ອົງການຄຸ້ມຄອງ ວຽກງານທີ່ດິນກະສິກຳ

### ມາດຕາ 17 ອົງການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ

ອົງການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ປະກອບມີ:

1. ພະແນກກະສິກຳ ແລະ ປ່າໄມ້ແຂວງ;
2. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;
3. ໜ່ວຍງານເສດຖະກິດຂອງບ້ານ.

### ມາດຕາ 18 ສິດ ແລະ ໜ້າທີ່ ຂອງພະແນກ ກະສິກຳ ແລະ ປ່າໄມ້

ພະແນກ ກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ທີ່ດິນກະສິກຳ ໃນທົ່ວແຂວງ ໃຫ້ຖືກຕ້ອງຕາມເປົ້າໝາຍ;

2. ເປັນເຈົ້າການໃນການປະສານສົມທົບກັບບັນດາພະແນກການຂັ້ນແຂວງ ແລະ ຫ້ອງການຂັ້ນເມືອງທີ່ກ່ຽວຂ້ອງເພື່ອສຳຫຼວດ, ຈັດສັນກຳນົດແບ່ງເຂດ, ອອກໃບຢັ້ງຢືນພັດທະນາກະສິກຳ ແລະ ນຳພາການປັກຫຼັກໝາຍທີ່ດິນກະສິກຳໃນທົ່ວແຂວງ;

3. ເຂົ້າຮ່ວມຄົ້ນຄວ້າກັບພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນບົດວິພາກເສດຖະກິດ-ເຕັກນິກ, ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນກະສິກຳພ້ອມທັງກວດກາຕິດຕາມການນຳໃຊ້ທີ່ດິນກະສິກຳຂອງນັກລົງທຶນ, ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດໃຫ້ຖືກຕ້ອງຕາມສັນຍາ, ກົດໝາຍ ແລະ ລະບຽບການ;

4. ຮັບຜິດຊອບໂດຍກົງໃນການສັງລວມຂໍ້ມູນ ດ້ານການຫັນປ່ຽນທີ່ດິນກະສິກຳ ສະເໜີຕໍ່ຂັ້ນເທິງ, ເພື່ອພິຈາລະນາຫັນປ່ຽນດິນກະສິກຳ ໄປເປັນດິນປະເພດອື່ນ;

ລາຍງານສະພາບການເຄື່ອນໄຫວຂອງຕົນຕໍ່ອົງການປົກຄອງ ແລະ ສະພາປະຊາຊົນແຂວງຮັບຊາບເປັນແຕ່ລະໄລຍະ.

**ມາດຕາ 19 ສິດ ແລະ ໜ້າທີ່ຫ້ອງການກະສິກຳ ແລະ ປ່າໄມ້**

ຫ້ອງການກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ປະສານສົມທົບກັບອົງການປົກຄອງ ແລະ ພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນຂອງຕົນທີ່ຮັບຜິດຊອບ;

2. ເພື່ອຄຸ້ມຄອງການນຳໃຊ້ ທີ່ດິນກະສິກຳ ໃຫ້ຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງ;

3. ເປັນເຈົ້າການ ໃນການເຂົ້າຮ່ວມລົງສຳຫຼວດ, ຈັດສັນ, ກຳນົດແບ່ງເຂດ, ປັກຫຼັກໝາຍ ແລະ ອອກປຶ້ມຕິດຕາມການນຳໃຊ້ທີ່ດິນກະສິກຳ, ອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກໃຫ້ຊັດເຈນເປັນຕົ້ນ (ເຂດຜະລິດສະບຽງອາຫານ ແລະ ເຂດຜະລິດເປັນສິນຄ້າ);

4. ເຂົ້າຮ່ວມຄົ້ນຄ້ວາກັບພາກສ່ວນທີ່ກ່ຽວຂ້ອງໃນການທົບທວນບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນສິ່ງແວດລ້ອມ-ສັງຄົມຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ, ພ້ອມຕິດຕາມກວດກາ ການນຳໃຊ້ທີ່ດິນກະສິກຳຂອງນັກລົງທຶນ ແລະ ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດໃຫ້ຖືກຕ້ອງຕາມສັນຍາ, ກົດໝາຍ ແລະ ລະບຽບການ;

5. ສະຫຼຸບ, ລາຍງານ ຕໍ່ການຈັດຕັ້ງໃຫ້ທັງສາຍຕັ້ງ ແລະ ສາຍຂວາງຂອງຕົນ ເພື່ອຂໍທິດຊີ້ນຳສຳລັບການຈັດຕັ້ງປະຕິບັດວຽກຄຸ້ມຄອງນຳໃຊ້ທີ່ດິນກະສິກຳເປັນແຕ່ລະໄລຍະຢ່າງທັນການ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງໜ່ວຍງານເສດຖະກິດຂັ້ນບ້ານ**

ໜ່ວຍງານເສດຖະກິດຂັ້ນບ້ານມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ປະສານສົມທົບກັບອົງການປົກຄອງ ແລະ ພາກສ່ວນກ່ຽວຂ້ອງ ໃນທ້ອງຖິ່ນຕົນ ເພື່ອຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ໃຫ້ຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງ;

2. ເຂົ້າຮ່ວມໃນການເຂົ້າຮ່ວມລົງສຳຫຼວດ, ຈັດສັນ, ກຳນົດແບ່ງເຂດ, ປັກຫຼັກໝາຍ ແລະ ອອກປຶ້ມຕິດຕາມການນຳໃຊ້ທີ່ດິນກະສິກຳ, ຮັບຮູ້ໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ໃຫ້ປະຊາຊົນພາຍໃນບ້ານໃຫ້ມີຄວາມຍຸຕິທຳ;

3. ເຂົ້າຮ່ວມຄົ້ນຄວ້າກັບພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນບົດວິພາກເສດຖະກິດ-ເຕັກນິກ, ປະເມີນສິ່ງແວດລ້ອມ-ສັງຄົມ ຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ; ພ້ອມຕິດຕາມກວດກາ ການນຳໃຊ້ທີ່ດິນກະສິກຳຂອງນັກລົງທຶນ ແລະ ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງຕາມສັນຍາ, ກົດໝາຍ ແລະ ລະບຽບການ;

4. ເຄື່ອນໄຫວ, ຕິດຕາມ, ກວດກາການຫັນປ່ຽນທີ່ດິນກະສິກຳ ໄປເປັນດິນປະເພດອື່ນໆ ພາຍໃນຂອບເຂດບ້ານ ແລະ ລາຍງານໃຫ້ຂັ້ນເທິງກ່ຽວຂ້ອງຂັ້ນເມືອງ ເພື່ອແກ້ໄຂ.

## ໝວດທີ 7
## ອົງການກວດກາ ວຽກງານທີ່ດິນກະສິກຳ

**ມາດຕາ 21 ອົງການກວດກາການນຳໃຊ້ທີ່ດິນກະສິກຳ**

ອົງການກວດກາການນຳໃຊ້ທີ່ດິນກະສິກຳປະກອບມີ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງວຽກງານທີ່ດິນກະສິກຳ ຕາມທີ່ໄດ້ ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາປະຊາຊົນ, ອົງການກວດກາລັດຂັ້ນແຂວງລົງໄປ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນຂັ້ນແຂວງ ແລະ ຂັ້ນເມືອງ.

**ມາດຕາ 22 ເນື້ອໃນ ການກວດກາ**

ເນື້ອໃນຂອງການກວດກາວຽກງານທີ່ດິນກະສິກຳມີດັ່ງນີ້:

1. ກວດກາຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ຂອງ ແລະ ພະນັກງານທີ່ເຄື່ອນໄຫວວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ;

2. ກວດກາກ່ຽວກັບການຈັດຕັ້ງປະຕິບັດບັນດານິຕິກຳກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ;

3. ກວດກາການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ນິຕິກຳກ່ຽວກັບການຄຸ້ມຄອງນຳໃຊ້ທີ່ດິນກະສິກຳ.

**ມາດຕາ 23 ຮູບການກວດກາ**

ການກວດກາວຽກງານທີ່ດິນກະສິກຳມີດັ່ງນີ້:

1. ກວດກາປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການເປັນປະຈຳ ແລະ ກຳນົດເວລາແນ່ນອນ;

2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າຢ່າງໜ້ອຍ ຊາວສີ່ຊົ່ວໂມງ;

. ກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ໂດຍບໍ່ແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 24 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການກຳນົດ ແລະ ຄຸ້ມຄອງທີ່ດິນກະສິກຳປະກອບສ່ວນເຂົ້າໃນການຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ປົກປັກຮັກສາ ແລະ ພັດທະນາທີ່ດິນກະສິກຳຢ່າງມີປະສິດທິຜົນ, ປົກປັກຮັກສາສິ່ງແວດລ້ອມ ແລະ ດຳເນີນກິດຈະການດ້ານກະສິກຳ ຢ່າງຖືກຕ້ອງຕາມ ກົດໝາຍ, ລະບຽບການ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ຮັບນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 25 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຖືກປະຕິບັດ ມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນ ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ ກໍລະນີ ເບົາ ຫຼື ໜັກ.

**ມາດຕາ 26 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ດິນກະສິກຳ ຫາກໄດ້ລະເມີດຂໍ້ຕົກລົງສະບັບນີ້ເຊັ່ນ:

1. ຫັນປ່ຽນດິນນາເປັນດິນປຸກສ້າງທີ່ຢູ່ອາໄສຖາວອນໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 5.000 ກີບ/1ມ$^2$;
2. ຫັນປ່ຽນດິນນາເປັນດິນການຄ້າ ແລະ ບໍລິການໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 10.000 ກີບ/ 1ມ$^2$;
3. ຫັນປ່ຽນດິນກະສິກຳປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 2.000 ກີບ /1ມ$^2$ ;
4. ໄຖດິນກະສິກຳທີ່ມີຄວາມຄ້ອຍຊັນເກີນ 45% ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 1.500 ກີບ / 1ມ$^2$;
5. ການຈົກດິນ, ຖົມດິນກະສິກຳໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 2.000 ກີບ/1ມ$^2$.

ນອກຈາກການປັບໃໝ່ຕົ້ນຕໍທີ່ກ່າວມາຂ້າງເທິງນັ້ນແລ້ວ, ຜູ້ກະທຳຜິດຍັງໄດ້ເສຍຄ່າບູລະນະສິ່ງກໍ່ສ້າງເປັນຕົ້ນ: ຊົນລະປະທານ, ຄອງເໝືອງ ອື່ນໆ ຄິດໄລ່ຕາມເນື້ອທີ່ຖືກຖົມ 1 ຕາແມັດ 1,000 ກີບ (ນາທີ່ນຳໃຊ້ຊົນລະປະທານ ປູກເຂົ້າເປັນປົກກະຕິ) ພ້ອມນີ້ຍັງຈະໄດ້ຖືກ ຖອນໃບຢັ້ງຢືນນຳໃຊ້ທີ່ດິນກະສິກຳ, ໃບຕາດິນ ແລະ ໃບອະນຸຍາດອື່ນໆ ທີ່ກ່ຽວຂ້ອງຊົ່ວຄາວ ຈົນກວ່າໄດ້ຮັບການຄົ້ນຄວ້າພິຈາລະນາແກ້ໄຂຈາກອົງການຄຸ້ມຄອງກວດກາທີ່ກ່ຽວຂ້ອງ.

**ໝວດທີ 9**
**ບົດບັນຍັດສຸດທ້າຍ**

**ມາດຕາ 27 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບບັນດາພະແນກການ, ອົງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ພະແນກການ, ອົງການລັດທຽບເທົ່າ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ພາກສ່ວນທີ່ກ່ຽວ ຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງອຸດົມໄຊ
ເຈົ້າແຂວງ

ບຸນຄົງ ຫຼ້າຈຽມພອນ